ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1155 /ປທສ
ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ

ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 700 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄົ້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄົ້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 700 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 700 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 700 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 700 MHz

ແຖບຄວາມຖີ່ວິທະຍຸສື່ສານ 700 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄົ້ນຄວາມຖີ່ວິທະຍຸສື່ສານເປັນສອງທິດທາງ ຂາຂຶ້ນ ແລະ ຂາລົງ ຫຼື Frequency Division Duplex (FDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 703 - 748 MHz (45 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ຊຶ່ງແບ່ງອອກເປັນ 9 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 – B9;

3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 758 - 803 MHz (45 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາລົງ ຊຶ່ງແບ່ງອອກເປັນ 9 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1' – B9';
4. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 748 – 758 MHz (10 MHz) ເພື່ອເປັນໄລຍະຫ່າງລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ (Band Gap);
5. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 698 – 703 MHz (5 MHz) ແລະ 803 – 806 MHz (3 MHz) ເພື່ອເປັນແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນຈາກແຖບຄວາມຖີ່ວິທະຍຸສື່ສານຂ້າງຄຽງ.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 700 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 700 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ ແລະ ອະນຸຍາດເປັນຄູ່ຄື້ນຄວາມຖີ່ ລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 700 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະ ຂໍ້ທີ 5.317A, Resolution 224 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
4. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;

5. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບ�โทລະຄົມມະນາຄົມສາກົນ (ITU);
6. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, �โทລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ 700 MHz ເປັນແຖບຄວາມຖີ່ ສຳລັບລະບົບ�โทລະສັບເຄື່ອນທີ່ມາດຕະຖານ IMT ສະບັບເລກທີ 3105/ປທສ, ລົງວັນທີ 25 ທັນວາ 2015.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 1156 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ

ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 850 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄົ້ນຄວ້າຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄົ້ນຄວ້າຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 850 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 850 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 850 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 850 MHz

ແຖບຄວາມຖີ່ວິທະຍຸສື່ສານ 850 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຕາມຄົ້ນຄວ້າຄວາມຖີ່ວິທະຍຸສື່ສານເປັນສອງທິດທາງ ຂາຂຶ້ນ ແລະ ຂາລົງ ຫຼື Frequency Division Duplex (FDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 824 - 834 MHz (10 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ຊຶ່ງແບ່ງອອກເປັນ 2 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 - B2;

3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 869 - 879 MHz (10 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາລົງ ຊຶ່ງແບ່ງອອກເປັນ 2 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1'- B2';
4. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 834 – 869 MHz (35 MHz) ເພື່ອເປັນໄລຍະຫ່າງລະຫວ່າງ ແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 850 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 850 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ ແລະ ອະນຸຍາດເປັນຄູ່ຄື້ນຄວາມຖີ່ ລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 850 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງ ຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍ ສະເພາະ ຂໍ້ທີ 5.317A, Resolution 224 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີ ປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກ ໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
4. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);

6. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1157 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ເດືອນ 7 2021

ຂໍ້ຕົກລົງ

ວ່າດ້ວຍ: ການຮັບຮອງເອົາ ແຖບຄວາມຖີ່ວິທະຍຸສື່ສານ 900 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 900 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 900 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 900 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 900 MHz

ແຖບຄວາມຖີ່ວິທະຍຸສື່ສານ 900 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີແບ່ງຄື້ນຄວາມຖີ່ວິທະຍຸສື່ສານເປັນສອງທິດທາງ ຂາຂຶ້ນ ແລະ ຂາລົງ ຫຼື Frequency Division Duplex (FDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 880 - 915 MHz (35 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ;
3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 925 - 960 MHz (35 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາລົງ;

4. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 915 - 925 MHz (10 MHz) ເພື່ອເປັນໄລຍະຫ່າງລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 900 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະຫງວນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ 885 - 890 MHz ແລະ ຂາລົງ 930-935 MHz ສຳລັບການສື່ສານທາງລົດໄຟ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວສຳລັບລະບົບໂທລະສັບເຄື່ອນທີ່ພາຍໃນແຂວງ ຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ, ແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ ເພື່ອປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນລະບົບການສື່ສານທາງລົດໄຟ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 900 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະ ຂໍ້ທີ 5.317A, Resolution 224 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
4. ປະຕິບັດຕາມການປັບປ່ຽນ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);

6. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ 900 MHz ເປັນແຖບຄວາມຖີ່ ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ IMT ສະບັບເລກທີ 3108/ປທສ, ລົງວັນທີ 25 ທັນວາ 2015.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1158 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ

ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 1800 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 1800 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 1800 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 1800 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 1800 MHz

ແຖບຄວາມຖີ່ວິທະຍຸສື່ສານ 1800 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນโลຊີທີ່ແບ່ງຄື້ນຄວາມຖີ່ວິທະຍຸສື່ສານເປັນສອງທິດທາງ ຂາຂຶ້ນ ແລະ ຂາລົງ ຫຼື Frequency Division Duplex (FDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 1710 – 1785 MHz (75 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ຊຶ່ງແບ່ງອອກເປັນ 15 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 – B15;

3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 1805 – 1880 MHz (75 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາລົງ ຊຶ່ງແບ່ງອອກເປັນ 15 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1' – B15';
4. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 1785 – 1805 MHz (20 MHz) ເພື່ອເປັນໄລຍະຫ່າງແບ່ງລະຫວ່າງ ແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 1800 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 1800 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ ແລະ ອະນຸຍາດເປັນຄູ່ຄື້ນຄວາມຖີ່ ລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 1800 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງ ຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການຂອງ ສປປ ລາວ ແລະ ລະບຽບການຄື້ນຄວາມຖີ່ວິທະຍຸສື່ສານ ສາກົນ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະ ຂໍ້ທີ 5.384A ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ ແລະ ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມ ທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
4. ປະຕິບັດຕາມການປັບປ່ຽນ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມ ມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການຂອງ ສະຫະພາບໂທລະຄົມມະນາຄົມສາກົນ (ITU);

6. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ 1800 MHz ເປັນແຖບຄວາມຖີ່ ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ IMT ສະບັບເລກທີ 3104/ປທສ, ລົງວັນທີ 25 ທັນວາ 2015.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 1159 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ

ວ່າດ້ວຍ: ການຮັບຮອງເອົາ ແຖບຄວາມຖີ່ວິທະຍຸສື່ສານ 2100 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 2100 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 2100 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 2100 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 2100 MHz

ແຖບຄວາມຖີ່ວິທະຍຸສື່ສານ 2100 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄື້ນຄວາມຖີ່ວິທະຍຸສື່ສານເປັນສອງທິດທາງ ຂາຂຶ້ນ ແລະ ຂາລົງ ຫຼື Frequency Division Duplex (FDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 1920 – 1980 MHz (60 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ຊຶ່ງແບ່ງອອກເປັນ 12 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 – B12;

3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 2110 – 2170 MHz (60 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາລົງ ຊຶ່ງແບ່ງອອກເປັນ 12 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1' – B12';
4. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 1980 – 2110 MHz (130 MHz) ເພື່ອເປັນໄລຍະຫ່າງລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 2100 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 2100 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ ແລະ ອະນຸຍາດເປັນຄູ່ຄື້ນຄວາມຖີ່ລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 2100 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
4. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);

6. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ 1920 – 1980 MHz ແລະ 2110 - 2170 MHz ເປັນແຖບຄວາມຖີ່ ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ IMT ສະບັບເລກທີ 3106/ປທສ, ລົງວັນທີ 25 ທັນວາ 2015.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1160 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ

ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 2300 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 2300 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 2300 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 2300 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 2300 MHz

ແຖບຄວາມຖີ່ວິທະຍຸສື່ສານ 2300 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄື້ນຄວາມຖີ່ວິທະຍຸສື່ສານຕາມເວລາ Time Division Duplex (TDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານແຕ່ 2300 – 2390 MHz (90 MHz) ຊຶ່ງແບ່ງອອກເປັນ 18 ສ່ວນ (Block), ແຕ່ລະສ່ວນມີຄວາມກ້ວາງ 5 MHz ເລີ່ມແຕ່ສ່ວນທີ B1 – B18 ;

3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 2390 – 2400 MHz (10 MHz) ເພື່ອເປັນແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນຈາກແຖບຄວາມຖີ່ວິທະຍຸສື່ສານຂ້າງຄຽງ.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 2300 MHz

B1 5MHz	B2 5MHz	B3 5MHz	B4 5MHz	B5 5MHz	B6 5MHz	B7 5MHz	B8 5MHz	B9 5MHz	B10 5MHz	B11 5MHz	B12 5MHz	B13 5MHz	B14 5MHz	B15 5MHz	B16 5MHz	B17 5MHz	B18 5MHz	ແຖບຄວາມ ຖີ່ປ້ອງກັນ

2300 MHz 2390 MI 2400 MHz

ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 2300 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 2300 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການຄື້ນຄວາມຖີ່ວິທະຍຸສື່ສານສາກົນ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະແມ່ນລະບຽບການຂໍ້ທີ 5.384A, ມະຕິຕົກລົງ Resolution 223 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນ�โลຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃນແຖບນີ້ ຕ້ອງໃຊ້ວິທີການ Network Synchronization ເພື່ອປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນເຊິ່ງກັນ ແລະ ກັນລະຫວ່າງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ;
4. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
5. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
6. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);
7. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄຸ້ມຄອງຄວາມຖີ່, ກະຊວງ ໄປສະນີ, �โทລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ 2300 MHz ເປັນແຖບຄວາມຖີ່ ສຳລັບລະບົບ�โทລະສັບເຄື່ອນທີ່ມາດຕະຖານ IMT ສະບັບເລກທີ 3109/ປທສ, ລົງວັນທີ 25 ທັນວາ 2015.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1161 /ປທສ
ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ
ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 3400-3600 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 3400 - 3600 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 3400-3600 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 3400 – 3600 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 3400-3600 MHz

ແຖບຄວາມຖີ່ວິທະຍຸສື່ສານ 3400-3600 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄື້ນຄວາມຖີ່ວິທະຍຸສື່ສານຕາມເວລາ Time Division Duplex (TDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານແຕ່ 3400-3600 MHz (200 MHz) ຊຶ່ງແບ່ງອອກເປັນ 40 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 – B40;

3. ກຳນົດແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນກວ້າງ 40 MHz ຫຼື ໃຫຍ່ກວ່າ/ນ້ອຍກວ່າ 40 MHz ຕາມຄວາມເໝາະສົມໃນແຕ່ລະໄລຍະ ເພື່ອຮັບປະກັນບໍ່ກໍ່ໃຫ້ເກີດການລົບກວນລະບົບການສື່ສານຜ່ານດາວທຽມ ແລະ ລະບົບໂທລະສັບເຄື່ອນທີ່ມາດຕະຖານ IMT.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 3400-3600 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 3400 - 3600 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 3400 - 3600 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະຂໍ້ທີ 5.432B, 5.433A ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃນແຖບນີ້ ຕ້ອງໃຊ້ວິທີການ Network Synchronization ເພື່ອເປັນການປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນເຊິ່ງກັນ ແລະ ກັນລະຫວ່າງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານນີ້;
4. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
5. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
6. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);
7. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄົ້ນຄວ້າມະຖິ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1162 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ

ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 3700-3800 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄົ້ນຄວ້າຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄົ້ນຄວ້າຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 3700 - 3800 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 3700-3800 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 3700 – 3800 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 3700-3800 MHz

ແຖບຄວາມຖີ່ວິທະຍຸສື່ສານ 3700 – 3800 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄົ້ນຄວ້າຄວາມຖີ່ວິທະຍຸສື່ສານຕາມເວລາ Time Division Duplex (TDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານແຕ່ 3700 – 3800 MHz (100 MHz) ຊຶ່ງແບ່ງອອກເປັນ 20 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 – B20 ;

3. ກຳນົດແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນກວ້າງ 40 MHz ຫຼື ໃຫຍ່ກວ່າ/ນ້ອຍກວ່າ 40 MHz ຕາມຄວາມເໝາະສົມໃນແຕ່ລະໄລຍະ ເພື່ອຮັບປະກັນບໍ່ກໍ່ໃຫ້ເກີດການລົບກວນລະບົບການສື່ສານຜ່ານດາວທຽມ ແລະ ລະບົບໂທລະສັບເຄື່ອນທີ່ມາດຕະຖານ IMT.

ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 3700-3800 MHz



ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 3700 - 3800 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ.

ມາດຕາ 6: ເງື່ອນໄຂຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 3700 - 3800 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃນແຖບນີ້ ຕ້ອງໃຊ້ວິທີການ Network Synchronization ເພື່ອເປັນການປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນເຊິ່ງກັນ ແລະ ກັນລະຫວ່າງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານນີ້;
4. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
5. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
6. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

7. ຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃນແຖບ 3700 - 3800 MHz ຕ້ອງນຳໃຊ້ແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນກວ້າງ 40 MHz (3700 - 3740 MHz) ຫຼື ກວ້າງກວ່າ ພາຍໃນນະຄອນຫຼວງວຽງຈັນ ເພື່ອປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ລະບົບຄວບຄຸມ ແລະ ບັນຊາດາວທຽມ;

8. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1163 /ປທສ
ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

ຂໍ້ຕົກລົງ
ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 4900 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄົ້ນຄວ້າຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄົ້ນຄວ້າຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

ລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 4900 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 4900 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 4900 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 4900 MHz

ແຖບຄວາມຖີ່ວິທະຍຸສື່ສານ 4900 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຄົ້ນຄວ້າຄວາມຖີ່ວິທະຍຸສື່ສານຕາມເວລາ Time Division Duplex (TDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານແຕ່ 4800 – 4990 MHz (190 MHz) ຊຶ່ງແບ່ງອອກເປັນ 38 ສ່ວນ (Block), ແຕ່ລະສ່ວນມີຄວາມກ້ວາງ 5 MHz ເລີ່ມແຕ່ສ່ວນທີ B1 – B38 ;

3. ກຳນົດແຖບຄວາມຖີ່ປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນຕາມຄວາມເໝາະສົມໃນແຕ່ລະໄລຍະ ແຕ່ຕ້ອງຮັບປະກັນບໍ່ກໍ່ໃຫ້ເກີດການລົບກວນຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານຂ້າງຄຽງ.

ມາດຕາ 4: ແຜນອາດແຖບຄວາມຖີ່ວິທະຍຸສື່ສານ 4900 MHz

B1 5MHz	B2 5MHz	B3 5MHz	B4 5MHz	B5 5MHz	B6 5MHz	B7 5MHz	B8 5MHz	B9 5MHz	B10 5MHz	B11 5MHz	B12 5MHz	B13 5MHz	B14 5MHz	B15 5MHz	B16 5MHz	B17 5MHz	B18 5MHz	B19 5MHz	B20 5MHz	B21 5MHz	B22 5MHz	B23 5MHz	B24 5MHz	B25 5MHz	B26 5MHz	B27 5MHz	B28 5MHz	B29 5MHz	B30 5MHz	B31 5MHz	B32 5MHz	B33 5MHz	B34 5MHz	B35 5MHz	B36 5MHz	B37 5MHz	B38 5MHz

4800 MHz

4990 MHz

ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 4900 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ.

ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 4900 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການຄື້ນຄວາມຖີ່ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍສະເພາະຂໍ້ທີ 5.441B, Resolution 223 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໃນແຖບນີ້ ຕ້ອງໃຊ້ວິທີການ Network Synchronization ເພື່ອເປັນການປ້ອງກັນຄື້ນຄວາມຖີ່ວິທະຍຸສື່ສານລົບກວນເຊິ່ງກັນ ແລະ ກັນລະຫວ່າງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານນີ້;
4. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
5. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
6. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);

7. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

ມາດຕາ 7: ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 8: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ທັນສະໄໝ ກົມມະສິດ